ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------00------

ກະຊວງການເງິນ

ກົມພາສີ

ເລກທີ ໒໐໒໕/ກພສ

ນະຄອນຫຼວງວຽງຈັນ,ວັນທີ 25 JUL 2011

## ບົດແນະນຳ

ເຖິງ: ບັນດາພະແນກອ້ອມຂ້າງກົມພາສີ,ພາສີປະຈຳເຂດ,ດ່ານພາສີຊາຍແດນ,ອົງການຈັດຕັ້ງຂອງລັດ,ອົງການຈັດຕັ້ງສາກົນ,ບຸກຄົນ,ນິຕິບຸກຄົນ ແລະ ຜູ້ດຳເນີນການສົ່ງອອກ-ນຳເຂົ້າແລະ ຜ່ານແດນໃນທົ່ວປະເທດ.

ເລື້ອງ: ການຈັດຕັ້ງປະຕິບັດແບບພິມໃບແຈ້ງພາສີເປັນລາຍລະອຽດແບບອັດຕະໂນມັດລະບົບອາຊີກູດາ.

- ອີງຕາມກົດໝາຍວ່າດ້ວຍພາສີສະບັບເລກທີ 05/ສພຊ,ລົງວັນທີ 20 ພຶດສະພາ 2005.
- ອີງຕາມແຈ້ງການຂອງກະຊວງການເງິນສະບັບເລກທີ 1408/ກງ,ລົງວັນທີ 13 ມິຖຸນາ 2011 ເລື້ອງການການທົດລອງນຳໃຊ້ລະບົບບໍລິການແຈ້ງພາສີແບບອັດຕະໂນມັດລະບົບອາຊີກູດາຢູ່ດ່ານພາສີຂົວມິດຕະພາບ I ພາສີປະຈຳເຂດ V.
- ອີງຕາມຂໍ້ຕົກລົງຂອງກົມພາສີສະບັບເລກທີ 2025/ກພສ,ລົງວັນທີ 30 ມິຖຸນາ 2011 ວ່າດ້ວຍການຮັບຮອງຮູບແບບ ແລະ ອະນຸມັດນຳໃຊ້ແບບພິມໃບແຈ້ງພາສີເປັນລາຍລະອຽດແບບອັດຕະໂນມັດລະບົບອາຊີກູດາ.

ເພື່ອຮັບປະກັນໃຫ້ແກ່ ການຈັດຕັ້ງປະຕິບັດແບບພິມພາສີ ໃບແຈ້ງພາສີເປັນລາຍລະອຽດ ໃຫ້ມີຄວາມຖືກຕ້ອງ,ເປັນເອກະພາບໃນຂອບເຂດທົ່ວປະເທດ ແລະ ໃນການຈັດຕັ້ງປະຕິບັດການແຈ້ງພາສີແບບອີເລັກໂຕຣນິກ ( ອັດຕະໂນມັດ ) ໃຫ້ສອດຄ່ອງກັບລະບຽບການນຳໃຊ້ແບບພິມໃບແຈ້ງພາສີເປັນລາຍລະອຽດລະບົບເອກະພາບອາຊຽນ.

## ກົມພາສີອອກບົດແນະນຳ

1. ແບບພິມໃບແຈ້ງພາສີເປັນລາຍລະອຽດ ແບບອັດຕະໂນມັດ ລະບົບອາຊີກູດາມີຂະໜາດເຈ້ຍ 21,4 x 30,3 ຊມ ມີຄວາມໜາ 70 ແກມ ເປັນເຈ້ຍພື້ນສີຟ້າອ່ອນພິມໂລໂກພາສີ ແລະ ພາສາອັງກິດ Customs ໃສ່ກາງແບບພິມ.

2. ການແຈ້ງຂໍ້ມູນເປັນລາຍລະອຽດລົງໃນແບບພິມ ໃບແຈ້ງພາສີເປັນລາຍລະອຽດແບບອັດຕະໂນມັດ ລະບົບອາຊີກູດາ ແລະ ແບບພິມໃບແຈ້ງພາສີເປັນລາຍລະອຽດລະບົບເອກະພາບອາຊຽນ ແມ່ນໃຫ້ປະຕິບັດຕາມທີ່ກຳນົດໄວ້ໃນບົດແນະນຳຂອງກົມພາສີ ສະບັບເລກທີ 1696/ກພສ ລົງວັນທີ 17 ມິຖຸນາ 2010 ວ່າດ້ວຍ ການຈັດຕັ້ງປະຕິບັດນຳໃຊ້ໃບແຈ້ງພາສີເປັນ ລາຍລະອຽດ ລະບົບເອກະພາບອາຊຽນ.

3. ຜູ້ແຈ້ງພາສີ ຫຼື ຜູ້ໄດ້ຮັບມອບສິດ ຕ້ອງຍື່ນໃບແຈ້ງພາສີເປັນລາຍລະອຽດ ແລະ ເອກະສານປະກອບໃນຮູບແບບເຈັ້ຍ ຫຼື ຮູບແບບອີເລັກໂຕຣນິກຕາມຂັ້ນຕອນ ແລະ ລະບຽບການທາງພາສີ, ໃບແຈ້ງພາສີເປັນ ລາຍລະອຽດໃນສອງຮູບແບບມີຄຸນຄ່າເທົ່າທຽມກັນທາງດ້ານກົດໝາຍ.

4. ຜູ້ແຈ້ງພາສີ ຫຼື ຜູ້ໄດ້ຮັບມອບສິດ ຕ້ອງຮັບຜິດຊອບຕໍ່ທຸກໆຂໍ້ມູນທີ່ແຈ້ງເປັນລາຍລະອຽດລົງໃນແບບພິມໃບແຈ້ງພາສີເປັນລາຍລະອຽດທຸກຮູບແບບ ລວມທັງການແຈ້ງພາສີແບບອີເລັກໂຕຣນິກ.

5. ຜູ້ແຈ້ງພາສີ ແລະ ຜູ້ໄດ້ຮັບມອບສິດ ຕ້ອງຢັ້ງຢືນຮັບຮອງໃບແຈ້ງພາສີເປັນລາຍລະອຽດ ລວມທັງໃບແຈ້ງພາສີແບບອີເລັກໂຕຣນິກ ດ້ວຍການລົງລາຍເຊັນ ແລະ ຈ້ຳກາ, ລາຍເຊັນດີຈີຕອນໃນຮູບແບບໃດກໍ່ຕາມເຊັ່ນ: ລະຫັດສະເພາະທີ່ຖືກຮັບຮອງ ໂດຍຂະແໜງການກ່ຽວຂ້ອງ ແລະ ເປັນທີ່ຍອມຮັບໂດຍລັດຖະການພາສີ.

6. ລາຍເຊັນດີຈີຕອນຂອງຜູ້ແຈ້ງພາສີ ຫຼື ຜູ້ໄດ້ຮັບມອບສິດ ທີ່ຢັ້ງຢືນລົງໃນໃບແຈ້ງພາສີເປັນລາຍລະອຽດແບບອີເລັກໂຕຣນິກ ມີຄຸນຄ່າເທົ່າທຽມກັບລາຍເຊັນໃນໃບແຈ້ງພາສີເປັນລາຍລະອຽດແບບເຈັ້ຍ.

ດັ່ງນັ້ນ,ຈິ່ງໄດ້ແຈ້ງການມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ ຈົນກວ່າຈະມີການປ່ຽນແປງ ຫລື ມີການປັບປຸງໃໝ່ໃນແຕ່ລະໄລຍະ.

ຫົວໜ້າກົມພາສີ

ກະຊວງ ການເງິນ ກົມພາສີ

ສັນຕິພາບ ພິມວິຫານ